ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມນະໂຍບາຍເງິນຕາ

ເລກທີ 673/ກນງ

ນະຄອນຫຼວງວຽງຈັນ, ວັນທີ 18 AUG 2016

## ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດລັດ, ຮ່ວມທຶນ, ເອກະຊົນ, ໃນເຄືອ ແລະ ສາຂາຕ່າງປະເທດ

**ເລື່ອງ:** ການກຳນົດອັດຕາດອກເບ້ຍເງິນຝາກສະກຸນເງິນກີບຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມຂໍ້ຕົກລົງກ່ຽວກັບອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 676/ທຫລ, ລົງວັນທີ 17/08/2016.

**ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ອອກແຈ້ງການ:**

1. ອັດຕາເງິນເຟີ້ທີ່ບໍ່ລວມການເໜັງຕີງຂອງລາຄານ້ຳມັນ ສະເລ່ຍປີ 2015 ເທົ່າກັບ 3,72%.
2. ໃຫ້ທະນາຄານທຸລະກິດກຳນົດອັດຕາດອກເບ້ຍເງິນຝາກສະກຸນເງິນກີບ ແຕ່ລະປະເພດ ດັ່ງລຸ່ມນີ້:
   - ອັດຕາດອກເບ້ຍເງິນຝາກປະຢັດ ບໍ່ເກີນ 1,91%;
   - ອັດຕາດອກເບ້ຍເງິນຝາກ 3 ເດືອນ ບໍ່ເກີນ 3,20%;
   - ອັດຕາດອກເບ້ຍເງິນຝາກ 6 ເດືອນ ບໍ່ເກີນ 4,02%;
   - ອັດຕາດອກເບ້ຍເງິນຝາກ 12 ເດືອນ ບໍ່ເກີນ 5,72%;
   - ອັດຕາດອກເບ້ຍເງິນຝາກ 24 ເດືອນ ບໍ່ເກີນ 6,84%;
   - ອັດຕາດອກເບ້ຍເງິນຝາກ 36 ເດືອນ ບໍ່ເກີນ 6,90%;
   - ອັດຕາດອກເບ້ຍເງິນຝາກ 48 ເດືອນ ບໍ່ເກີນ 6,97%;
   - ອັດຕາດອກເບ້ຍເງິນຝາກ 60 ເດືອນ ບໍ່ເກີນ 7,04%;
3. ໃຫ້ທະນາຄານທຸລະກິດລາຍງານສະພາບການຈັດຕັ້ງປະຕິບັດອັດຕາດອກເບ້ຍເງິນຝາກ, ເງິນກູ້ ແຍກສະກຸນເງິນ, ແຍກໄລຍະເວລາ, ແຍກຂະແໜງການ ໃຫ້ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ເປັນລາຍເດືອນ ພາຍໃນ 5 ວັນລັດຖະການຂອງເດືອນຖັດໄປ.
4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ 01 ກັນຍາ 2016 ເປັນຕົ້ນໄປ.

ຫົວໜ້າກົມນະໂຍບາຍເງິນຕາ

ທະນາຄານ ແຫ່ງ ສປປ ລາວ
ກົມນະໂຍບາຍເງິນຕາ

ຄຳພຸດ ສິດທິລາດ